**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 2030 /ກສ

ນະຄອນຫຼວງວຽງຈັນ, ວັນທີ 31 OCT 2025

## ຄຳແນະນຳ
## ກ່ຽວກັບການເຮັດສັນຍາກະສິກຳ

- ອີງຕາມ ດຳລັດ ວ່າດ້ວຍກະສິກຳແບບມີສັນຍາ ສະບັບເລກທີ 56/ລບ, ລົງວັນທີ 27 ມັງກອນ 2025;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ໜັງສືສະເໜີ ຂອງກົມສົ່ງເສີມກະສິກຳ ແລະ ສະຫະກອນ ສະບັບເລກທີ 2043/ກສກສ, ລົງວັນທີ 25 ກັນຍາ 2025;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ສະບັບເລກທີ 2382/ຫກ, ລົງວັນທີ 16 ຕຸລາ 2025.

ໃນໄລຍະຜ່ານມາ ອົງການຈັດຕັ້ງລັດ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງສາກົນ ໄດ້ເອົາໃຈໃສ່ຊຸກຍູ້ສົ່ງເສີມການຜະລິດກະສິກຳແບບມີສັນຍາ ຕິດພັນກັບການສົ່ງເສີມການມີວຽກເຮັດງານທຳ, ສ້າງລາຍຮັບ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ໂດຍສະເພາະ ຊາວກະສິກອນ, ກຸ່ມການຜະລິດ ແລະ ສະຫະກອນ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ, ຄຽງຄູ່ກັນນັ້ນ ການຜະລິດກະສິກຳເປັນສິນຄ້າ ບາງທ້ອງຖິ່ນກໍຍັງບໍ່ທັນຫັນເຂົ້າສູ່ການຜະລິດກະສິກຳແບບມີສັນຍາ, ມີຂໍ້ຈຳກັດໃນການເຂົ້າເຖິງປັດໃຈການຜະລິດ, ເຕັກນິກ ແລະ ຕະຫຼາດ, ບາງທ້ອງຖິ່ນກໍໄດ້ມີໜໍ່ແໜງການຜະລິດແບບມີສັນຍາ, ແຕ່ກໍຍັງຂາດຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ.

ເພື່ອແກ້ໄຂບັນຫາດັ່ງກ່າວ, ທັງເປັນການຫຼຸດຜ່ອນຄວາມສ່ຽງທີ່ອາດຈະເກີດຂຶ້ນ ແລະ ຮັບປະກັນການປະຕິບັດສັນຍາໃຫ້ໄດ້ຮັບຜົນດີນັ້ນ,

## ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກຄຳແນະນຳ:

### I. ຈຸດປະສົງ, ຄວາມໝາຍ ແລະ ຄວາມສຳຄັນ

#### 1. ຈຸດປະສົງ

ຄຳແນະນຳສະບັບນີ້ ໄດ້ແນະນຳກ່ຽວກັບຫຼັກການ, ເງື່ອນໄຂ, ເນື້ອໃນ ແລະ ຂັ້ນຕອນການເຮັດສັນຍາກະສິກຳ ໃຫ້ລະອຽດ, ຈະແຈ້ງ, ເຂົ້າໃຈງ່າຍ ແລະ ຈັດຕັ້ງປະຕິບັດໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ ເພື່ອຜັນຂະຫຍາຍເນື້ອໃນ ໝວດທີ 3, 4 ແລະ ໝວດທີ 5 ຂອງດຳລັດ ວ່າດ້ວຍກະສິກຳແບບມີສັນຍາ ສະບັບເລກທີ 56/ລບ, ລົງວັນທີ 27 ມັງກອນ 2025 ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນ ລາຄາຜົນຜະລິດກະສິກຳ, ແກ້ໄຂບັນຫາ ແລະ ຂໍ້ຈຳກັດ ກ່ຽວກັບທີ່ດິນ, ແຮງງານ, ປັດໄຈການຜະລິດ, ເຕັກນິກ ແລະ ຕະຫຼາດ ລວມທັງການເຂົ້າເຖິງແຫຼ່ງທຶນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

#### 2. ຄວາມໝາຍ ຂອງສັນຍາກະສິກຳ

ສັນຍາກະສິກຳ ແມ່ນ ການຕົກລົງ ລະຫວ່າງ ຄູ່ສັນຍາ ກ່ຽວກັບການຜະລິດ, ປຸງແຕ່ງ ແລະ ບໍລິການດ້ານກະສິກຳ ຊຶ່ງພາໃຫ້ ສິດ ແລະ ພັນທະທາງແພ່ງ ເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ ໂດຍມີການກຳນົດເງື່ອນໄຂຂອງການຜະລິດ, ລາຄາ ແລະ ຮູບແບບການຊື້-ຂາຍ ລວມທັງເງື່ອນໄຂອື່ນຂອງສັນຍາ.

### 3. ຄວາມສຳຄັນ ຂອງສັນຍາກະສິກຳ

ສັນຍາກະສິກຳ ມີຄວາມສຳຄັນ ຕໍ່ຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ ແລະ ຜູ້ປະກອບການ ໃນການຜະລິດ, ປຸງແຕ່ງ ແລະ ບໍລິການກະສິກຳ ເຮັດໃຫ້ຊາວກະສິກອນ ເຂົ້າເຖິງປັດໄຈການຜະລິດ, ສິນເຊື່ອ ແລະ ເຕັກໂນໂລຊີໃໝ່, ຄູ່ສັນຍາ ມີຜົນປະໂຫຍດຮ່ວມກັນ ແລະ ເພີ່ມຄວາມເຊື່ອໝັ້ນ ລະຫວ່າງ ຄູ່ສັນຍາ, ວິທີການຜະລິດ ໄດ້ຮັບການປັບປຸງ ຕາມມາດຕະຖານ ແລະ ຄວາມຕ້ອງການຂອງຕະຫຼາດ.

ຊາວກະສິກອນ, ກຸ່ມການຜະລິດ ແລະ ສະຫະກອນ ສາມາດເຂົ້າເຖິງປັດໄຈການຜະລິດ, ສິນເຊື່ອ, ແນວພັນ, ໄດ້ຮັບການຊ່ວຍເຫຼືອດ້ານວິຊາການ, ໄດ້ຮັບໂອກາດທາງດ້ານທັກສະ ແລະ ເຕັກນິກໃໝ່, ສາມາດເຂົ້າເຖິງຕະຫຼາດໄດ້ດີຂຶ້ນ. ສ່ວນຜູ້ປະກອບການ ໄດ້ຮັບຄວາມສະດວກຫຼາຍດ້ານ ເປັນຕົ້ນ ສາມາດແກ້ໄຂບັນຫາຂາດທີ່ດິນ, ແຮງງານ, ຜົນຜະລິດ ໄດ້ມາດຕະຖານ ທັງປະລິມານ ແລະ ຄຸນນະພາບ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດ ແລະ ໄດ້ຮັບນະໂຍບາຍສົ່ງເສີມຈາກລັດ.

## II. ແນະນຳເພີ່ມເຕີມບາງເນື້ອໃນ

### 1. ລັກສະນະຂອງສັນຍາ

ສັນຍາກະສິກຳ ມີ ສອງ ລັກສະນະ ດັ່ງນີ້:

- ສັນຍາສອງຝ່າຍ ແມ່ນ ການຕົກລົງ ລະຫວ່າງ ຄູ່ສັນຍາ ທີ່ມີພຽງແຕ່ສອງຝ່າຍ ກ່ຽວກັບການຜະລິດ, ປຸງແຕ່ງ ແລະ ບໍລິການກະສິກຳ;
- ສັນຍາຫຼາຍຝ່າຍ ແມ່ນ ການຕົກລົງ ລະຫວ່າງຄູ່ສັນຍາ ທີ່ມີຫຼາຍກວ່າສອງຝ່າຍ ເຊັ່ນ 3 ຝ່າຍ, 4 ຝ່າຍ ຫຼື ຫຼາຍກວ່ານັ້ນ ກ່ຽວກັບການຜະລິດ, ປຸງແຕ່ງ ແລະ ບໍລິການກະສິກຳ.

### 2. ເງື່ອນໄຂຂອງສັນຍາ

ສັນຍາກະສິກຳທີ່ສ້າງຂຶ້ນ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1) ກຳນົດເປົ້າໝາຍຂອງສັນຍາໃຫ້ຊັດເຈນ, ມີຈິງ, ຖືກຕ້ອງຕາມກົດໝາຍ, ບໍ່ຂັດກັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສາມາດປະຕິບັດໄດ້ ດ້ວຍການກຳນົດເປົ້າໝາຍຂອງສັນຍາທີ່ມີລັກສະນະສະເພາະເຈາະຈົງຕາມປະເພດ ແລະ ກິດຈະກຳ ທີ່ຈະປະຕິບັດຮ່ວມກັນ ເປັນຕົ້ນ ການຜະລິດ, ການປຸງແຕ່ງ ແລະ ການບໍລິການກະສິກຳ, ຕ່າງຝ່າຍມີຄວາມພ້ອມ ແລະ ມີຄວາມສາມາດໃນການຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ;
2) ຄູ່ສັນຍາມີຄວາມສະໝັກໃຈ ໂດຍປາສະຈາກການ ຫຼົງຜິດ, ຕົວະຍົວະຫຼອກລວງ, ບັງຄັບນາບຂູ່ ຫຼື ໃຊ້ຄວາມຮຸນແຮງ ຫຼື ຄວາມອັບປະໂຫຍດຂອງຝ່າຍໃດໜຶ່ງ ຊຶ່ງແຕ່ລະຝ່າຍ ມີຄວາມເພິ່ງພໍໃຈໃນການເຮັດສັນຍາຮ່ວມກັນ ໂດຍການຮັບຮູ້ຂໍ້ມູນທີ່ຄົບຖ້ວນ ແລະ ເຂົ້າໃຈຢ່າງຈະແຈ້ງກ່ອນການເຊັນສັນຍາ;
3) ຄູ່ສັນຍາ ມີຄວາມສາມາດທາງດ້ານການປະພຶດດ້ວຍຕົນເອງໃນວັນເຊັນສັນຍາ ຊຶ່ງຜູ້ຈະເຊັນສັນຍາ ຕ້ອງມີອາຍຸ ສິບແປດ ປີ ຂຶ້ນໄປ, ບໍ່ເປັນບ້າ ແລະ ເສຍຈິດ, ກໍລະນີເປັນ ກຸ່ມການຜະລິດ, ສະຫະກອນ ແລະ ຜູ້ປະກອບການ ຕ້ອງມີໃບອະນຸຍາດສ້າງຕັ້ງ, ໃບທະບຽນ ຫຼື ເອກະສານຢັ້ງຢືນຕົວຕົນ;
4) ຄູ່ສັນຍາຝ່າຍໃດໜຶ່ງ ຕ້ອງປະກອບອົງປະກອບກະສິກຳແບບມີສັນຍາທີ່ເປັນ ທີ່ດິນ, ແຮງງານ, ເງິນ, ປັດໄຈການຜະລິດ, ເຕັກນິກ, ການເກັບກ່ຽວ, ເຄື່ອງມື ແລະ ກົນຈັກການຜະລິດ, ການປຸງແຕ່ງ ແລະ ຕະຫຼາດ ແຕ່ ສອງ ອົງປະກອບຂຶ້ນໄປ ໂດຍໃຫ້ຄູ່ສັນຍາແຕ່ລະຝ່າຍ ຕ້ອງມີຢ່າງໜ້ອຍ ສອງ ອົງປະກອບ ທີ່ກຳນົດຢູ່ໃນ ເກົ້າ ອົງປະກອບ ເພື່ອນຳມາປະກອບໃນການເຮັດສັນຍາກະສິກຳ.

   ຍົກຕົວຢ່າງ ບາງສັນຍາກະສິກຳ ສອງຝ່າຍ ແລະ ຫຼາຍຝ່າຍ ມີດັ່ງນີ້:

   - **ສັນຍາກະສິກຳສອງຝ່າຍ**: ກຸ່ມການຜະລິດ ມີ ດິນ ແລະ ແຮງງານ, ສ່ວນຜູ້ປະກອບການ ມີ ເງິນ, ເຕັກນິກ ແລະ ຕະຫຼາດ;
   - **ສັນຍາກະສິກຳຫຼາຍຝ່າຍ**: ກຸ່ມການຜະລິດ ມີ ດິນ, ແຮງງານ ແລະ ເຕັກນິກ, ສ່ວນຜູ້ປະກອບການ ມີ ປັດໄຈການຜະລິດ, ເງິນ ແລະ ຕະຫຼາດ, ສຳລັບ ສະຫະກອນ ມີ ເຄື່ອງມື, ກົນຈັກການຜະລິດ ແລະ ການປຸງແຕ່ງ.



h

**3. ເນື້ອໃນຂອງສັນຍາ**

ເນື້ອໃນສັນຍາກະສິກຳ ໃຫ້ນຳໃຊ້ "ແບບພິມ ຂ" ໂດຍມີເນື້ອໃນຕົ້ນຕໍ ດັ່ງນີ້:

1) **ວັນ, ເວລາ ແລະ ສະຖານທີ່ເຮັດສັນຍາ**: ຕ້ອງກຳນົດວັນທີ ແລະ ເວລາໃນການເຊັນສັນຍາ ລວມທັງສະຖານທີ່ ເຊັ່ນ ບ້ານ, ຕາແສງ, ເມືອງ ຫຼື ນະຄອນ, ແຂວງ ຫຼື ນະຄອນຫຼວງວຽງຈັນ ບ່ອນເຊັນສັນຍາ;

2) **ຊື່, ນາມສະກຸນ ແລະ ບ່ອນຢູ່ຂອງຄູ່ສັນຍາ**: ຕ້ອງກຳນົດລະອຽດ ຊື່, ນາມສະກຸນ, ເບີໂທຕິດຕໍ່, ບ່ອນຢູ່ ຫຼື ສະຖານທີ່ຕັ້ງຂອງຄູ່ສັນຍາ;

3) **ເປົ້າໝາຍສັນຍາ, ລາຄາ, ກຳນົດເວລາປະຕິບັດ, ການຊຳລະ ແລະ ການນຳສົ່ງ:** ເປົ້າໝາຍຂອງສັນຍາ ຕ້ອງສະເພາະເຈາະຈົງຕາມປະເພດ ແລະ ກິດຈະກຳ ທີ່ຈະປະຕິບັດຮ່ວມກັນ; ການກຳນົດລາຄາ ແມ່ນຕາມລາຄາຂຶ້ນລົງຕາມທ້ອງຕະຫຼາດ ແຕ່ຕ້ອງກຳນົດລາຄາຄ້ຳປະກັນຕ່ຳສຸດ ບົນພື້ນຖານການເຈລະຈາຕໍ່ລອງຂອງຄູ່ສັນຍາ; ກຳນົດເວລາປະຕິບັດ ແມ່ນໄລຍະເວລາປະຕິບັດສັນຍາ ຕັ້ງແຕ່ວັນມີຜົນສັກສິດ, ວັນໝົດອາຍຸ ແລະ ເງື່ອນໄຂການຕໍ່ສັນຍາ; ການຊຳລະ ຄວນມີການກຳນົດອັດຕາສ່ວນ, ຮູບການ ແລະ ວິທີການຊຳລະ ແລະ ການນຳສົ່ງ ຄວນມີການກຳນົດສະຖານທີ່ ຮັບ-ສົ່ງ ສິນຄ້າ, ຜູ້ຮັບຜິດຊອບໃນການຂົນສົ່ງ, ການກວດກາມາດຕະຖານການຜະລິດ, ມາດຕະຖານສິນຄ້າ, ປະລິມານ ແລະ ຄຸນນະພາບ;

4) **ສະຖານທີ່ປະຕິບັດສັນຍາ ແລະ ພັນທະໃນການແຈ້ງໃຫ້ກັນຊາບ:** ສະຖານທີ່ປະຕິບັດສັນຍາ ແມ່ນສະຖານທີ່ ຜະລິດ, ປຸງແຕ່ງ ຫຼື ບໍລິການກະສິກຳ ຊຶ່ງຕ້ອງກຳນົດທີ່ຕັ້ງ, ຈຸດພິກັດຕອນດິນ, ເນື້ອທີ່ດິນ, ຈຳນວນຕອນດິນ ແລະ ເອກະສານຢັ້ງຢືນສິດນຳໃຊ້ທີ່ດິນ; ພັນທະໃນການແຈ້ງໃຫ້ກັນຊາບ ຕ້ອງກຳນົດແຈ້ງໃນກໍລະນີພົບຄວາມຫຍຸ້ງຍາກໃນການປະຕິບັດສັນຍາ ຫຼື ມີຈຸດປະສົງປັບປຸງ, ຍົກເລີກສັນຍາ ໃຫ້ຄູ່ສັນຍາແຈ້ງໃຫ້ກັນຊາບ ດ້ວຍວິທີໃດວິທີໜຶ່ງ, ຢູ່ໃສ ແລະ ເວລາໃດ;

5) **ການຄ້ຳປະກັນການປະຕິບັດສັນຍາ**: ແມ່ນ ການຄ້ຳປະກັນທາງດ້ານກົດໝາຍ ແລະ ການຄ້ຳປະກັນຕາມສັນຍາ ທີ່ໄດ້ຕົກລົງຮ່ວມກັນ ຊຶ່ງໃນສັນຍາຕ້ອງໄດ້ກຳນົດແຈ້ງ ກ່ຽວກັບຄວາມຮັບຜິດຊອບຂອງຄູ່ສັນຍາແຕ່ລະຝ່າຍ ກ່ຽວກັບເງື່ອນໄຂຂອງການຄ້ຳປະກັນການປະຕິບັດສັນຍາ ເປັນຕົ້ນ ດິນ, ແຮງງານ, ເງິນ, ປັດໄຈການຜະລິດ ໂດຍສິ່ງທີ່ນຳມາຄ້ຳປະກັນນັ້ນ ຄູ່ສັນຍາ ບໍ່ສາມາດໂອນ, ຂາຍ, ມອບ ຫຼື ນຳໃຊ້ເຂົ້າໃນເປົ້າໝາຍອື່ນທີ່ບໍ່ໄດ້ຮັບການເຫັນດີຈາກຄູ່ສັນຍາ;

6) **ສິດ ແລະ ພັນທະ ຂອງຄູ່ສັນຍາ, ຜົນສະທ້ອນຂອງການລະເມີດສັນຍາ:** ຕ້ອງກຳນົດສິດຂອງແຕ່ລະຝ່າຍ ທີ່ສາມາດເຮັດໄດ້ ແລະ ຜົນປະໂຫຍດທີ່ຈະໄດ້ຮັບ ລວມທັງພັນທະທີ່ຕ້ອງປະຕິບັດດ້ວຍຄວາມຮັບຜິດຊອບ ຕໍ່ການປະຕິບັດສັນຍາ ເພື່ອບັນລຸຕາມເປົ້າໝາຍທີ່ວາງໄວ້. ນອກນັ້ນ ຍັງຕ້ອງກຳນົດຜົນສະທ້ອນຂອງການລະເມີດສັນຍາ ເປັນຕົ້ນ ຄວາມຮັບຜິດຊອບຂອງຄູ່ສັນຍາຕໍ່ການລະເມີດເງື່ອນໄຂຕ່າງໆທີ່ກຳນົດໄວ້ໃນສັນຍາ;

7) **ຮູບການ ແລະ ອົງການແກ້ໄຂຂໍ້ຂັດແຍ່ງ:** ຕ້ອງກຳນົດເຖິງວິທີການທີ່ຈະແກ້ໄຂບັນຫາ ເປັນຕົ້ນ ແກ້ໄຂດ້ວຍຄູ່ສັນຍາເອງ ຫຼື ໄກ່ເກ່ຍດ້ວຍບຸກຄົນທີ ສາມ ຫຼື ຜ່ານກົນໄກການຮ້ອງທຸກ ຂອງ ສປປ ລາວ, ສຳລັບ ອົງການແກ້ໄຂຂໍ້ຂັດແຍ່ງ ໃຫ້ກຳນົດເລີ່ມຈາກຮາກຖານ ເປັນຕົ້ນ ການຈັດຕັ້ງບ້ານ, ຄະນະກຳມະການປົກຄອງຕາແສງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ, ຫ້ອງການຍຸຕິທຳຂັ້ນເມືອງ;

8) **ເງື່ອນໄຂຂອງການປ່ຽນແປງ ແລະ ການສິ້ນສຸດສັນຍາກ່ອນກຳນົດ:** ຕ້ອງກຳນົດເງື່ອນໄຂຂອງການປ່ຽນແປງເນື້ອໃນ ແລະ ການສິ້ນສຸດສັນຍາໃຫ້ລະອຽດຈະແຈ້ງ ເພື່ອເປັນຊ່ອງທາງໃນການປັບປຸງສັນຍາໃນຕໍ່ໜ້າ ແລະ ຫຼີກລ່ຽງຊ່ອງຫວ່າງ ຫຼື ອຸປະສັກໃນການປະຕິບັດສັນຍາ ລວມທັງປ້ອງກັນເຫດການໃດໜຶ່ງທີ່ອາດຈະເກີດຂຶ້ນຈາກການປະຕິບັດສັນຍາ ເປັນຕົ້ນ ການເໜັງຕີງຂອງລາຄາ, ໄພພິບັດ.

**4. ຂັ້ນຕອນການສ້າງ ແລະ ປະຕິບັດສັນຍາກະສິກຳ**

**4.1. ການສະເໜີ**

ບຸກຄົນ, ນິຕິບຸກຄົນ ແລະ ລວມໝູ່ ທີ່ມີຈຸດປະສົງດຳເນີນກິດຈະການ ກ່ຽວກັບກະສິກຳແບບມີສັນຍາ ຕ້ອງຄົ້ນຄວ້າສ້າງຮ່າງສັນຍາເບື້ອງຕົ້ນຕາມ "ແບບພິມ ກ" ເພື່ອສະເໜີຕໍ່ ບຸກຄົນ, ນິຕິບຸກຄົນ ຫຼື ລວມໝູ່ ທີ່ຕົນຕ້ອງການເຮັດສັນຍາຮ່ວມກັນນັ້ນ ພ້ອມທັງກຳນົດວັນທີແຈ້ງຕອບໃຫ້ຊັດເຈນ.

**4.2. ການຕອບຮັບສັນຍາ**

ເມື່ອບຸກຄົນ, ນິຕິບຸກຄົນ ຫຼື ລວມໝູ່ ທີ່ໄດ້ຮັບຮ່າງສັນຍາແລ້ວ ຕ້ອງຄົ້ນຄວ້າເນື້ອໃນຮ່າງສັນຍາດັ່ງກ່າວ ໃຫ້ລະອຽດຄົບຖ້ວນ ໂດຍສະເພາະ ເປົ້າໝາຍສັນຍາ, ກຳນົດເວລາປະຕິບັດກິດຈະກຳ, ການຊຳລະ, ການຄ້ຳປະກັນການປະຕິບັດສັນຍາ, ສິດ ແລະ ພັນທະ ຂອງຄູ່ສັນຍາ. ໃນກໍລະນີ ມີຄວາມສົນໃຈເຂົ້າຮ່ວມສັນຍາ ຕ້ອງແຈ້ງຕອບຜູ້ສະເໜີພາຍໃນກຳນົດເວລາ ຊາວ ວັນ ຫຼື ຕາມການກຳນົດຂອງຜູ້ສະເໜີ ນັບແຕ່ມື້ໄດ້ຮັບຄຳສະເໜີເປັນຕົ້ນໄປ. ກໍລະນີ ມີການຕອບຮັບຈະເຂົ້າຮ່ວມສັນຍາ ຕ້ອງໄດ້ສືບຕໍ່ດຳເນີນການເຈລະຈາຕໍ່ລອງເງື່ອນໄຂຕ່າງໆ ຕາມເນື້ອໃນຂອງຮ່າງສັນຍາເບື້ອງຕົ້ນທີ່ຜູ້ສະເໜີໄດ້ສ້າງຂຶ້ນນັ້ນ ເພື່ອຮັບປະກັນຄວາມເປັນເອກະພາບ ກ່ອນນຳໄປສູ່ການສ້າງສັນຍາຮ່ວມກັນຕາມ "ແບບພິມ ຂ".

**4.3. ການສ້າງສັນຍາ**

ເມື່ອຜູ້ສະເໜີ ແລະ ຜູ້ໄດ້ຮັບຮ່າງສັນຍາ ໄດ້ຄົ້ນຄວ້າປຶກສາຫາລື ແລະ ເປັນເອກະພາບເບື້ອງຕົ້ນແລ້ວ ຕ້ອງດຳເນີນການສ້າງສັນຍາກະສິກຳ ຕາມ ຫົກ ບາດກ້າວ ດັ່ງນີ້:

1). **ການເກັບກຳຂໍ້ມູນ:** ຜູ້ປະກອບການ ຫຼື ນັກລົງທຶນ ທີ່ຈະດຳເນີນສັນຍາກະສິກຳ ຕ້ອງໄດ້ລົງສົບທົບກັບຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ ຫຼື ຜູ້ເປັນເປົ້າໝາຍໃນການສ້າງສັນຍາ ເພື່ອເກັບກຳຂໍ້ມູນ ກ່ຽວກັບເນື້ອທີ່ການປູກ, ຊະນິດພືດທີ່ປູກ, ຈຳນວນຜົນຜະລິດ, ທ່າແຮງ ແລະ ສິ່ງທ້າທາຍ. ສຳລັບ ຄູ່ສັນຍາທີ່ເປັນຊາວກະສິກອນ, ກຸ່ມການຜະລິດ ຫຼື ສະຫະກອນ ຕ້ອງສຶກສາປະຫວັດການເຄື່ອນໄຫວດຳເນີນທຸລະກິດຂອງຜູ້ປະກອບການ ເປັນຕົ້ນ ຄວາມສາມາດໃນການລົງທຶນ, ຄວາມຮັບຜິດຊອບຕໍ່ຜູ້ຜະລິດ, ສັງຄົມ ແລະ ສິ່ງແວດລ້ອມ;

2). **ການເຈລະຈາຕໍ່ລອງ:** ເປັນການນຳສະເໜີນະໂຍບາຍ ຫຼື ເປັນການສະແດງເຈດຈຳນົງຂອງຄູ່ສັນຍາ ບົນພື້ນຖານຄວາມສາມາດຕົວຈິງຂອງຕົນ ໃນການສະໜອງ ຫຼື ຮັບຜິດຊອບອົງປະກອບກະສິກຳແບບມີສັນຍາ ແຕ່ ສອງ ອົງປະກອບຂຶ້ນໄປ ລວມທັງຈຸດພິເສດ ແລະ ເງື່ອນໄຂຂອງການສະໜອງອົງປະກອບກະສິກຳແບບມີສັນຍາ ເພື່ອໃຫ້ແຕ່ລະຝ່າຍໄດ້ຮັບຮູ້ນຳກັນຢ່າງຈະແຈ້ງ. ໃນບາດກ້າວນີ້, ຜູ້ປະກອບການ ແລະ ຊາວກະສິກອນ, ກຸ່ມການຜະລິດ ຫຼື ສະຫະກອນ ຕ້ອງເປີດໃຈສົນທະນາເລື່ອງຕ່າງໆ ທີ່ແຕ່ລະຝ່າຍໃຫ້ຄວາມສົນໃຈ;

3). **ການປະເມີນຄວາມເປັນໄປໄດ້ໃນການຮ່ວມມື:** ພາຍຫຼັງທີ່ແຕ່ລະຝ່າຍໄດ້ຮັບຂໍ້ມູນທີ່ເກັບກຳມາແລ້ວ ແຕ່ລະຝ່າຍ ຕ້ອງດຳເນີນການປະເມີນຄວາມເປັນໄປໄດ້ໃນການເຂົ້າຮ່ວມສັນຍາກະສິກຳ ຢ່າງລະອຽດ ແລະ ຮອບດ້ານເພື່ອກຳໄດ້ສະຖານະພາບ ຂອງຜູ້ຈະເຮັດສັນຍາຮ່ວມກັນ ພ້ອມທັງຮັບເອົາ ຫຼື ປະຕິເສດການສ້າງສັນຍາດັ່ງກ່າວ;

4). **ການສ້າງຮ່າງສັນຍາ:** ເມື່ອຜ່ານການປະເມີນຄວາມເປັນໄປໄດ້ໃນການຮ່ວມມື ແລະ ແຕ່ລະຝ່າຍ ໄດ້ສະແດງເຈດຈຳນົງທີ່ຈະສ້າງສັນຍາຮ່ວມກັນແລ້ວ ຝ່າຍຜູ້ສະເໜີສ້າງສັນຍາ ຕ້ອງເປັນເຈົ້າການສົມທົບກັບຜູ້ຕອບຮັບສັນຍາ ພ້ອມກັນຮ່າງສັນຍາຕາມ "ແບບພິມ ຂ" ເພື່ອຮັບປະກັນໃຫ້ສັນຍາມີເນື້ອໃນຄົບຖ້ວນ, ສົມບູນ, ຈະແຈ້ງ, ມີຄວາມຈິງ, ຍຸຕິທຳ ແລະ ມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ ໃຫ້ມີການຮັບຮູ້ແຕ່ຫົວທີ;

5). **ການເຊັນສັນຍາ:** ພາຍຫຼັງຜູ້ສະເໜີສ້າງສັນຍາ ແລະ ຜູ້ຕອບຮັບສັນຍາ ໄດ້ເອກະພາບຕໍ່ກັບເນື້ອໃນ ແລະ ເງື່ອນໄຂສັນຍາ ທີ່ໄດ້ຮ່ວມກັນສ້າງຂຶ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບສິດຕາມກົດໝາຍ ລົງລາຍເຊັນຮ່ວມກັນທັງສອງຝ່າຍ ຫຼື ຫຼາຍຝ່າຍ ໂດຍມີການເຊັນພະຍານຢ່າງໜ້ອຍ ຝ່າຍລະ ສອງ ຄົນ ຊຶ່ງໄດ້ຮັບການເຫັນດີຈາກຄູ່ສັນຍາ;

6). **ການຢັ້ງຢືນສັນຍາ:** ພາຍຫຼັງເຊັນສັນຍາຮ່ວມກັນແລ້ວ ຄູ່ສັນຍາຕ້ອງນຳເອົາສັນຍາດັ່ງກ່າວ ໄປສະເໜີຕໍ່ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ບ່ອນທີ່ດິນທຳການຜະລິດຕັ້ງຢູ່ ພາຍໃນກຳນົດເວລາ ຫ້າ ວັນລັດຖະການນັບແຕ່ວັນລົງລາຍເຊັນຂອງຄູ່ສັນຍາ ເພື່ອຢັ້ງຢືນຄວາມຖືກຕ້ອງດ້ານເຕັກນິກການຜະລິດ, ປຸງແຕ່ງ ແລະ ບໍລິການກະສິກຳ ທີ່ກຳນົດໄວ້ໃນສັນຍາດັ່ງກ່າວ. ຫຼັງຈາກນັ້ນ, ຄູ່ສັນຍາ ສາມາດນຳເອົາສັນຍາໄປຢັ້ງຢືນນຳອົງການທະບຽນສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະບຽນສານ.

**4.4. ການປະຕິບັດສັນຍາ**

ພາຍຫຼັງສັນຍາກະສິກຳ ໄດ້ຮັບການຢັ້ງຢືນຄວາມຖືກຕ້ອງດ້ານວິຊາການແລ້ວ ຄູ່ສັນຍາ ຕ້ອງເປັນເຈົ້າການປະສານສົມທົບກັນຈັດຕັ້ງປະຕິບັດສັນຍາດ້ວຍຄວາມຮັບຜິດຊອບສູງ ແລະ ເຂັ້ມງວດ. ໃນກໍລະນີ ເຫັນຝ່າຍໃດໜຶ່ງ ບໍ່ສາມາດດຳເນີນຕາມແຜນ ຫຼື ບໍ່ສອດຄ່ອງກັບເນື້ອໃນສັນຍາ ທີ່ໄດ້ຕົກລົງຮ່ວມກັນ ຫຼື ເກີດມີບັນຫາອື່ນ ທີ່ເປັນການກີດ

ຂອງການຈັດຕັ້ງປະຕິບັດສັນຍາ, ຄູ່ສັນຍາ ຕ້ອງປຶກສາຫາລືກັນ ເພື່ອແກ້ໄຂບັນຫາຮ່ວມກັນ ໃຫ້ທັນກັບສະພາບການ.

**4.5. ການຊຸກຍູ້, ຕິດຕາມ ແລະ ທົບທວນສັນຍາ**

ເພື່ອຮັບປະກັນການປະຕິບັດເງື່ອນໄຂ ແລະ ກິດຈະກຳ ທີ່ໄດ້ກຳນົດໄວ້ໃນສັນຍາ, ທັງສາມາດແກ້ໄຂບັນຫາ ແລະ ຂໍ້ຜິດພາດ ທີ່ອາດຈະເກີດຂຶ້ນໃນໄລຍະການປະຕິບັດສັນຍານັ້ນ, ຄູ່ສັນຍາ ຕ້ອງດຳເນີນການຊຸກຍູ້, ຕິດຕາມ ກວດກາ ແລະ ປະເມີນການຈັດຕັ້ງປະຕິບັດສັນຍາຂອງຕົນ ແລະ ຄູ່ສັນຍາ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ, ພ້ອມທັງຮ່ວມກັນທົບທວນຄືນເຖິງ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້ ຈາກການປະຕິບັດສັນຍາ ເພື່ອພ້ອມກັນກຳນົດທິດທາງ ແລະ ວິທີການໃນຕໍ່ໜ້າ ຢ່າງມີປະສິດທິພາບ.

ສຳລັບເນື້ອໃນການຊຸກຍູ້, ຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດສັນຍາ ແມ່ນ ເນື້ອໃນສັນຍາທີ່ຕົກລົງກັນ ເຊັ່ນ ການສະໜອງປັດໄຈການຜະລິດ, ການປະຕິບັດມາດຕະຖານການຜະລິດ, ຄຸນນະພາບສິນຄ້າ, ຜົນກະທົບທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ, ຄວາມເພິ່ງພໍໃຈຂອງຜູ້ປະກອບການ ແລະ ຊາວກະສິກອນ ເພື່ອສ້າງໂອກາດໃຫ້ຄູ່ສັນຍາ ໄດ້ມີຄວາມເຂົ້າໃຈ ແລະ ເຊື່ອໝັ້ນກັນຫຼາຍຂຶ້ນ, ພາກສ່ວນທີ່ກ່ຽວຂ້ອງ ໄດ້ຮັບຮູ້, ເຂົ້າໃຈເຖິງຜົນຂອງການປະຕິບັດສັນຍາທີ່ຜ່ານມາ, ກໍລະນີທີ່ມີສິ່ງທ້າທາຍ ຫຼື ຂໍ້ຄົງຄ້າງເກີດຂຶ້ນ ກໍສາມາດແກ້ໄຂຢ່າງເອກະພາບ.

ສ່ວນງົບປະມານໃນການລົງຊຸກຍູ້, ຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດສັນຍາ ລວມທັງການຈັດກອງປະຊຸມທົບທວນຄືນວຽກງານດັ່ງກ່າວ ຕ້ອງໄດ້ມີການຄາດຄະເນງົບປະມານ, ໜ້າວຽກທີ່ຈະເຮັດ ແລະ ບຸກຄະລາກອນທີ່ຮັບຜິດຊອບ ໃສ່ເນື້ອໃນຂອງສັນຍາ ຫຼື ຈະເຮັດເປັນເອກະສານຄັດຕິດກັບສັນຍາ.

## III. ມາດຕະການ ແລະ ວິທີການຈັດຕັ້ງປະຕິບັດ

1. ໃຫ້ ກົມສົ່ງເສີມກະສິກຳ ແລະ ສະຫະກອນ ເປັນເຈົ້າການປະສານສົມທົບກັບ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຈັດຕັ້ງໂຄສະນາ, ເຜີຍແຜ່, ຝຶກອົບຮົມ, ແນະນຳ ແລະ ປະຕິບັດ ຄຳແນະນຳສະບັບນີ້ ໂດຍສ້າງເປັນ ແຜນງານ, ແຜນການ ແລະ ໂຄງການລະອຽດໃນການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
2. ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເປັນເຈົ້າການປະສານສົມທົບກັບ ຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເຜີຍແຜ່, ແນະນຳ ແລະ ຈັດຝຶກອົບຮົມ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ກຸ່ມການຜະລິດ, ສະຫະກອນ, ຜູ້ປະກອບການ ພ້ອມທັງສ້າງແຜນການເຄື່ອນໄຫວ ເກັບກຳຂໍ້ມູນ ແລະ ວາງແຜນການສົ່ງເສີມກະສິກຳແບບມີສັນຍາ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ກົມສົ່ງເສີມກະສິກຳ ແລະ ສະຫະກອນ, ພະແນກກະສິກຳ ແລະ ສິ່ງແວດລ້ອມຂັ້ນແຂວງ ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເປັນເຈົ້າການຊຸກຍູ້, ຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ພ້ອມທັງມີການສະຫຼຸບລາຍງານໃຫ້ຂັ້ນເທິງຂອງຕົນເປັນແຕ່ລະໄລຍະ ເພື່ອຮູ້ໄດ້ເຖິງຂໍ້ສະດວກ, ຫຍຸ້ງຍາກ ແລະ ບັນຫາໃນການຈັດຕັ້ງປະຕິບັດ ເພື່ອປັບປຸງ ແລະ ແກ້ໄຂ ໃຫ້ທັນເວລາ.

## IV. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 12 ທັນວາ 2025 ເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ລັດຖະມົນຕີ

**ປອ. ລິນຄຳ ດວງສະຫວັນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ລັດຖະມົນຕີ

**ແບບພິມ ກ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ໜັງສືສະເໜີ

**ຮຽນ:** ທ່ານ ............................................................................ ທີ່ນັບຖື.

**ເລື່ອງ:** ສະເໜີເຮັດສັນຍາກະສິກຳ ກ່ຽວກັບ..............................................

- ອີງຕາມ ປະມວນກົດໝາຍແພ່ງ ສະບັບເລກທີ 55/ສພຊ, ລົງວັນທີ 06 ທັນວາ 2018;
- ອີງຕາມ ດຳລັດວ່າດ້ວຍກະສິກຳແບບມີສັນຍາ ສະບັບເລກທີ 56/ລບ, ລົງວັນທີ 27 ມັງກອນ 2025;
- ອີງຕາມ ..............................................................................................

ຂ້າພະເຈົ້າ ທ່ານ.............................................................. ວັນ ເດືອນ ປີເກີດ:...............................
ສັນຊາດ:............................... ອາຊີບ:............................................ ທີ່ຢູ່ປັດຈຸບັນ ໜ່ວຍ:..................
ບ້ານ:.................................... ຕາແສງ:................................. ນະຄອນ/ເມືອງ:................................
ນະຄອນຫຼວງວຽງຈັນ/ແຂວງ:............................................. ເບີໂທລະສັບ:........................................
ມີຄວາມສົນໃຈທີ່ຈະເຂົ້າຮ່ວມເຮັດສັນຍາກະສິກຳ ກັບ ບໍລິສັດ/ສະຫະກອນ/ກຸ່ມ/ທ່ານ ..................................
ເພື່ອດຳເນີນການຜະລິດ/ປຸງແຕ່ງ/ບໍລິການ ກ່ຽວກັບ...........................................................................
.................................................................................................................................
.................................................................................................................................
.................................................................................................................................

(ສຳລັບເງື່ອນໄຂ ແລະ ວິທີການຮ່ວມມືລະອຽດ ພວກເຮົາຈະໄດ້ຮ່ວມກັນປຶກສາຫາລືເພີ່ມຕື່ມ ເພື່ອກ້າວໄປສູ່ການສ້າງສັນຍາຮ່ວມກັນຢ່າງເປັນລາຍລັກອັກສອນ ພາຍຫຼັງໄດ້ຮັບການຕອບຮັບເຂົ້າຮ່ວມເຮັດສັນຍາກະສິກຳ).

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ເພື່ອພິຈາລະນາຄົ້ນຄວ້າຕາມຄວາມເໝາະສົມດ້ວຍ.

ທີ່ ນະຄອນ/ເມືອງ........................., ວັນທີ...................

**ຜູ້ສະເໜີ**

ລາຍເຊັນ: .................................

ຊື່ແຈ້ງ:.......................................

**ແບບພິມ ຂ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ/ແຂວງ..............
ນະຄອນ/ເມືອງ............................

## ສັນຍາກະສິກຳ
## ກ່ຽວກັບ ...........................

### ລະຫວ່າງ

ທ່ານ ............................................................ ວັນ ເດືອນ ປີເກີດ:........................................
ສັນຊາດ:.................................. ອາຊີບ:.................................. ທີ່ຢູ່ປັດຈຸບັນ ໜ່ວຍ:......................
ບ້ານ:...................................... ຕາແສງ:............................. ນະຄອນ/ເມືອງ:...............................
ນະຄອນຫຼວງວຽງຈັນ/ແຂວງ:...................................................... ເບີໂທລະສັບ:...................................
ໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ: ................................ ລົງວັນທີ:........................... ວັນທີໝົດ ອາຍຸ:....................... ທີ່ຕັ້ງສຳນັກງານ: ເຮືອນ ຫຼື ອາຄານເລກທີ:...................... ຖະໜົນ:......................
ບ້ານ:........................ ນະຄອນ/ເມືອງ:......................... ນະຄອນຫຼວງວຽງຈັນ/ແຂວງ...........................
(ຕໍ່ໄປນີ້ເອີ້ນວ່າ **"ຝ່າຍ ກ"**)

### ແລະ

ທ່ານ............................................................. ວັນ ເດືອນ ປີເກີດ:........................................
ສັນຊາດ:..................................... ອາຊີບ:............................... ທີ່ຢູ່ປັດຈຸບັນ ໜ່ວຍ:…...................
ບ້ານ:...................................... ຕາແສງ:................................ ນະຄອນ/ເມືອງ:...............................
ນະຄອນຫຼວງວຽງຈັນ/ແຂວງ:................................................... ເບີໂທລະສັບ:.......................................
ໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ: .................................. ລົງວັນທີ:......................... ວັນທີໝົດ ອາຍຸ:......................... ທີ່ຕັ້ງສຳນັກງານ: ເຮືອນ ຫຼື ອາຄານເລກທີ:..................... ຖະໜົນ:..........................
ບ້ານ:............................ ນະຄອນ/ເມືອງ:......................... ນະຄອນຫຼວງວຽງຈັນ/ແຂວງ........................
(ຕໍ່ໄປນີ້ເອີ້ນວ່າ **"ຝ່າຍ ຂ"**)

### ຄູ່ສັນຍາທັງສອງຝ່າຍ ໄດ້ຕົກລົງເຫັນດີເປັນເອກະພາບກັນ ດັ່ງນີ້:

**ມາດຕາ 1 ຈຸດປະສົງ**

ສັນຍາສະບັບນີ້ ສ້າງຂຶ້ນເພື່ອເປັນບ່ອນອີງໃນການດຳເນີນກິດຈະກຳຂອງຄູ່ສັນຍາດ້ານ ການຜະລິດ/ ປຸງແຕ່ງ/ບໍລິການ ກະສິກຳ ກ່ຽວກັບ.............................................................................. ຊຶ່ງ **"ຝ່າຍ ກ"** ມີ ທີ່ດິນ/ແຮງງານ/ເງິນ/ປັດໄຈການຜະລິດ/ເຕັກນິກ/ການເກັບກ່ຽວ/ເຄື່ອງມື ແລະ ກົນຈັກການຜະລິດ/ການປຸງແຕ່ງ ແລະ ຕະຫຼາດ (ຢ່າງໜ້ອຍ ສອງ ອົງປະກອບ) ເພື່ອລົງທຶນຮ່ວມກັບ **"ຝ່າຍ ຂ"**. ສ່ວນຝ່າຍ **"ຝ່າຍ ຂ"** ມີ ........................................................ (ຢ່າງໜ້ອຍ ສອງ ອົງປະກອບ) ເພື່ອລົງທຶນຮ່ວມກັບ **"ຝ່າຍ ກ"**.

**ມາດຕາ 2 ເປົ້າໝາຍຂອງສັນຍາ**

ເພື່ອເປັນບ່ອນອີງໃຫ້ແກ່ການດຳເນີນງານຂອງຄູ່ສັນຍາ ກ່ຽວກັບ........................... ແນໃສ່ຫຼຸດຜ່ອນຄວາມສ່ຽງໃນການລົງທຶນຜະລິດ, ປຸງແຕ່ງ ແລະ ບໍລິການກະສິກຳ, ສາມາດເຂົ້າເຖິງຕະຫຼາດຫຼາຍຂຶ້ນ ແລະ ສ້າງຜົນປະໂຫຍດໃຫ້ແກ່ຄູ່ສັນຍາ ລວມທັງພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 3 ມາດຕະຖານການຜະລິດ, ມາດຕະຖານສິນຄ້າ ແລະ ລາຄາ**

ທັງ ສອງ ຝ່າຍ ເຫັນດີເປັນເອກະພາບ ກຳນົດມາດຕະຖານການຜະລິດ, ມາດຕະຖານສິນຄ້າ ແລະ ລາຄາ ດັ່ງນີ້:

1. **ມາດຕະຖານການຜະລິດ** (ກຳນົດແຈ້ງມາດຕະຖານການຜະລິດໃດໜຶ່ງ ທີ່ຈະນຳໃຊ້ໃນການປະຕິບັດສັນຍາ)
   - ມາດຕະຖານ ການຜະລິດທົ່ວໄປ......................................................................................
   - ມາດຕະຖານ ການຜະລິດກະສິກຳອິນຊີ..............................................................................
   - ມາດຕະຖານ ການຜະລິດກະສິກຳທີ່ດີ.................................................................................
   - ມາດຕະຖານ .............................................................................................................
2. **ມາດຕະຖານສິນຄ້າ** ຕ້ອງຮັບປະກັນຄຸນນະພາບ ແລະ ຄວາມປອດໄພ ຂອງຜົນຜະລິດ ດັ່ງນີ້:
   - ສີຂອງສິນຄ້າ............................................................................................................
   - ລົດຊາດຂອງສິນຄ້າ....................................................................................................
   - ຂະໜາດ................................................., ນ້ຳໜັກ.................................................
   - ການຫຸ້ມຫໍ່....................., ການບັນຈຸ........................., ການເກັບຮັກສາ...................
   - ສະຫຼາກ..........................................., ກາໝາຍ.......................................................
   - ..............................................................................................................................
3. **ດ້ານລາຄາ** ແມ່ນອີງໃສ່ປະເພດຂອງສິນຄ້າ ດັ່ງນີ້:
   - ຊື່......................... ປະເພດ 1: ...................ກິໂລ:..............., ລາຄາ: ........................
   - ຊື່......................... ປະເພດ 1: ...................ກິໂລ:..............., ລາຄາ: ........................
   - ຊື່......................... ປະເພດ 1: ...................ກິໂລ:..............., ລາຄາ: ........................
   - ປະລິມານສິນຄ້າທັງໝົດ ທີ່ຄູ່ສັນຍາຕົກລົງກັນ ........................................................ກິໂລ.

**ມາດຕາ 4 ສະຖານທີ່ປະຕິບັດສັນຍາ**

ສະຖານທີ່ຜະລິດ/ປຸງແຕ່ງ/ບໍລິການ: ຖະໜົນ......................................., ໜ່ວຍ:......................., ບ້ານ........................., ຕາແສງ:....................................., ນະຄອນ/ເມືອງ................................., ນະຄອນຫຼວງວຽງຈັນ/ແຂວງ.........................................................................................................

ສະຖານທີ່ມອບ-ຮັບສິນຄ້າ: ຖະໜົນ..............................................., ໜ່ວຍ:......................., ບ້ານ........................., ຕາແສງ:....................................., ນະຄອນ/ເມືອງ................................., ນະຄອນຫຼວງວຽງຈັນ/ແຂວງ.........................................................................................................

**ມາດຕາ 5 ການຂົນສົ່ງສິນຄ້າ ແລະ ການຊຳລະ**

ການຂົນສົ່ງສິນຄ້າແຕ່ລະຄັ້ງ ຕ້ອງມີການເຊັນຢັ້ງຢືນ ທັງຜູ້ມອບ (ຂົນສົ່ງ) ແລະ ຜູ້ຮັບ ຊຶ່ງຝ່າຍ......... ຈະຮັບຜິດຊອບຕໍ່ຄ່າຂົນສົ່ງສິນຄ້າຈາກ ຝ່າຍ......... ແຕ່ຕົ້ນທາງຮອດປາຍທາງ ຫຼື ເຖິງຈຸດມອບຮັບສິນຄ້າ. ປະລິມານສິນຄ້າ ຝ່າຍ......... ຕ້ອງໄດ້ສະໜອງໃຫ້ແກ່ ຝ່າຍ......... ຢ່າງໜ້ອຍຈຳນວນ...............ກິໂລ/ຖ້ຽວ.

ຝ່າຍ......... ຕ້ອງຊຳລະຄ່າສິນຄ້າໃຫ້ແກ່ ຝ່າຍ......... ແບບເງິນສົດ/ເງິນໂອນ ໃຫ້ຄົບຖ້ວນ/ຢ່າງໜ້ອຍ ................% ຂອງມູນຄ່າສິນຄ້າທັງໝົດ ຫຼື ພາຍຫຼັງໄດ້ຮັບສິນຄ້າຄົບຖ້ວນ/ຈຳນວນ............... ໃນແຕ່ລະຖ້ຽວ ພາຍໃນກຳນົດເວລາ..........ວັນ ນັບແຕ່ວັນທີ...................................................

**ມາດຕາ 6 ການຄ້ຳປະກັນການປະຕິບັດສັນຍາ**

ເພື່ອສະແດງໃຫ້ເຫັນເຖິງ ການຮ່ວມມືຂອງຄູ່ສັນຍາ ຊຶ່ງແຕ່ລະຝ່າຍຍິນດີຄ້ຳປະກັນສັນຍາໂດຍການປະກອບອົງປະກອບ ຫຼື ປັດໄຈການລົງທຶນຮ່ວມພາຍໃຕ້ສັນຍາກະສິກຳສະບັບນີ້ ດັ່ງນີ້:

1. **"ຝ່າຍ ກ"** ປະກອບ: ........................ ຈຳນວນ.................... ເປັນມູນຄ່າ......................ກີບ ........................... ຈຳນວນ.................... ເປັນມູນຄ່າ...........................ກີບ, ..................ຈຳນວນ ........................... ເປັນມູນຄ່າ............................ ກີບ.................................;

2. **"ຝ່າຍ ຂ"** ປະກອບ: ........................ ຈຳນວນ.................... ເປັນມູນຄ່າ......................ກີບ ........................... ຈຳນວນ.................... ເປັນມູນຄ່າ...........................ກີບ, ..................ຈຳນວນ ........................... ເປັນມູນຄ່າ............................ ກີບ.................................;

3. **"ຝ່າຍ...."** ປະກອບ: ........................ ຈຳນວນ.................... ເປັນມູນຄ່າ......................ກີບ ........................... ຈຳນວນ.................... ເປັນມູນຄ່າ...........................ກີບ, ..................ຈຳນວນ ........................... ເປັນມູນຄ່າ............................ ກີບ.................................

***(ໝາຍເຫດ: ສຳລັບສັນຍາສອງຝ່າຍ ແມ່ນຈະບໍ່ມີຝ່າຍອື່ນເຂົ້າຮ່ວມ)***

**ມາດຕາ 7 ສິດ ແລະ ພັນທະຂອງ "ຝ່າຍ ກ"**

1. ເຫັນດີເອົາ ເງິນສົດ ຈຳນວນ........................ ກີບ. ນອກນັ້ນ ຍັງມີ ປັດໄຈການຜະລິດ ປະເພດຝຸ່ນ ຈຳນວນ..................., ແນວພັນ.................... ຈຳນວນ........................, ຮັບຜິດຊອບການຝຶກອົບຮົມດ້ານເຕັກນິກ........................, ການປຸງແຕ່ງ ແລະ ຕະຫຼາດ................... (ຢ່າງໜ້ອຍ ສອງ ອົງປະກອບ);
2. ໄດ້ຮັບສິນຄ້າຕາມມາດຕະຖານ, ຄຸນນະພາບ ແລະ ປະລິມານ ຄົບຖ້ວນຕາມສັນຍາ;
3. ປະຕິເສດ ທີ່ຈະບໍ່ຊື້ສິນຄ້ານຳ "ຝ່າຍ ຂ" ໃນກໍລະນີ ສິນຄ້າບໍ່ໄດ້ຕາມມາດຕະຖານການຜະລິດ ແລະ ມາດຕະຖານສິນຄ້າ ທີ່ໄດ້ລະບຸໄວ້ໃນສັນຍາສະບັບນີ້;
4. ແນະນຳ, ຕັກເຕືອນ, ປັບໃໝ ຫຼື ຍົກເລີກສັນຍາ ຫາກກໍລະນີ "ຝ່າຍ ຂ" ລະເມີດສັນຍາ;
5. ສະເໜີຫາອົງການແກ້ໄຂຂໍ້ຂັດແຍ່ງ ຫາກເກີດບັນຫາກັບ "ຝ່າຍ ຂ";
6. ສະໜອງອົງປະກອບ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ;
7. ແນະນຳ, ສ້າງຄວາມເຂົ້າໃຈດ້ານເຕັກນິກ, ມາດຕະຖານການຜະລິດ, ຄຸນນະພາບສິນຄ້າ ທີ່ຕົນຕ້ອງການ ຢ່າງຈະແຈ້ງ ແລະ ຊັດເຈນ;
8. ກວດກາ ມາດຕະຖານ, ຄຸນນະພາບ ແລະ ປະລິມານ ຂອງສິນຄ້າ ຢ່າງເປັນປົກກະຕິ;
9. ຊຳລະເງິນ ໃຫ້ແກ່ "ຝ່າຍ ຂ" ຢ່າງຄົບຖ້ວນ ຕາມສັນຍາ;
10. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ການຕົກລົງຂອງຄູ່ສັນຍາ.

**ມາດຕາ 8 ສິດ ແລະ ພັນທະຂອງ "ຝ່າຍ ຂ"**

1. ປະກອບທີ່ດິນ............................, ເນື້ອທີ່ຈຳນວນ.........................ເຮັກຕາ, ຮັບຜິດຊອບແຮງງານ................, ການເກັບກ່ຽວ.........................., ເຄື່ອງມື ແລະ ກົນຈັກການຜະລິດ ປະເພດ.................. (ໃຫ້ມີຢ່າງໜ້ອຍ ສອງ ອົງປະກອບ);
2. ຜະລິດສິນຄ້າ ແລະ ສະໜອງສິນຄ້າ ໃຫ້ໄດ້ຄຸນນະພາບ, ຖືກຕ້ອງຕາມເຕັກນິກ, ມາດຕະຖານ ແລະ ປະລິມານຄົບຖ້ວນ ຕາມທີ່ໄດ້ຕົກລົງກັນໃນສັນຍາ;
3. ໄດ້ຮັບເງິນຈາກ "ຝ່າຍ ກ" ຢ່າງຄົບຖ້ວນຕາມສັນຍາ;
4. ທວງຖາມການຊຳລະເງິນ ຈາກ "ຝ່າຍ ກ" ໃນກໍລະນີ ມີຄວາມຊັກຊ້າໃນການຊຳລະ;
5. ແນະນຳ, ຕັກເຕືອນ, ປັບໃໝ ຫຼື ຍົກເລີກສັນຍາ ຫາກກໍລະນີ "ຝ່າຍ ກ" ລະເມີດສັນຍາ;
6. ແນະນຳ ແລະ ສຶກສາອົບຮົມສະມາຊິກໃຫ້ເຂົ້າໃຈຕໍ່ເນື້ອໃນສັນຍາຢ່າງລະອຽດ ກ່ອນການເຊັນສັນຍາ ພ້ອມທັງຮັບປະກັນການປະຕິບັດສັນຍາສະບັບນີ້ຢ່າງເຂັ້ມງວດ;
7. ປະຕິເສດທີ່ຈະບໍ່ສະໜອງສິນຄ້າໃຫ້ "ຝ່າຍ ກ" ໃນກໍລະນີ ທີ່ "ຝ່າຍ ກ" ຄ້າງຊຳລະ ຫຼື ບໍ່ປະຕິບັດຕາມລາຄາທີ່ໄດ້ຕົກລົງກັນໃນສັນຍາ;

8. ສະເໜີຫາວິທີການແກ້ໄຂຂໍ້ຂັດແຍ່ງ ຫາກເກີດບັນຫາກັບ "ຝ່າຍ ກ";
9. ສະໜອງອຸປະກອນ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ;
10. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ການຕົກລົງຂອງຄູ່ສັນຍາ.

**ມາດຕາ 9 ການແຈ້ງໃຫ້ກັນຊາບ**

ການແຈ້ງໃຫ້ກັນຊາບ ແມ່ນພັນທະຂອງຄູ່ສັນຍາ ເມື່ອເຫັນວ່າການຈັດຕັ້ງປະຕິບັດສັນຍາມີບັນຫາ ຫຼື ສ້າງຄວາມບໍ່ພໍໃຈຕໍ່ຄູ່ສັນຍາຝ່າຍໃດໜຶ່ງ ເພື່ອໃຫ້ຮູ້ໄດ້ເຖິງຄວາມຕ້ອງການ ຫຼື ການສື່ສານອື່ນໆ ທີ່ຢູ່ພາຍໃຕ້ສັນຍາສະບັບນີ້ ດ້ວຍວິທີການຂຽນເປັນພາສາລາວ ຫຼື ພາສາອັງກິດ ແລ້ວນຳສົ່ງດ້ວຍມື, ອີເມວ ຫຼື ທາງໄປສະນີ ທີ່ໄດ້ຈ່າຍເງິນຄ່າສົ່ງຕົ້ນທາງແລ້ວ ເພື່ອຮັບປະກັນວ່າການແຈ້ງດັ່ງກ່າວໄປຮອດເປົ້າໝາຍແລ້ວ ໂດຍມີການຢັ້ງຢືນຈາກຄູ່ສັນຍາ.

**ມາດຕາ 10 ຜົນສະທ້ອນ ຂອງການລະເມີດສັນຍາ**

ຜົນສະທ້ອນ ຂອງການລະເມີດສັນຍາ ຄູ່ສັນຍາ ຕ້ອງຮັບຜິດຊອບ ດັ່ງນີ້:

1. ຖ້າ "ຝ່າຍ ກ" ບໍ່ມາເກັບຊື້ຕາມເງື່ອນໄຂຕ່າງໆ ທີ່ໄດ້ກຳນົດໄວ້ໃນສັນຍາສະບັບນີ້, "ຝ່າຍ ຂ" ຈະຮຽກເກັບຄ່າເສຍຫາຍດັ່ງກ່າວຄືນຈາກ "ຝ່າຍ ກ" ຕາມຄວາມເສຍຫາຍຕົວຈິງ;

2. ຖ້າ "ຝ່າຍ ຂ" ສະໜອງສິນຄ້າໃຫ້ກັບ "ຝ່າຍ ກ" ບໍ່ຄົບຕາມສັນຍາ, "ຝ່າຍ ກ" ຈະຮຽກເກັບຄ່າເສຍຫາຍດັ່ງກ່າວຄືນຈາກ "ຝ່າຍ ຂ" ຕາມຄວາມເສຍຫາຍຕົວຈິງ.

**ມາດຕາ 11 ຮູບການ ແລະ ວິທີການແກ້ໄຂຂໍ້ຂັດແຍ່ງ**

ຂໍ້ຂັດແຍ່ງ ທີ່ເກີດຂຶ້ນຈາກການປະຕິບັດສັນຍາສະບັບນີ້ ຄູ່ສັນຍາສາມາດນຳໃຊ້ຫຼາຍວິທີການແກ້ໄຂຂໍ້ຂັດແຍ່ງ ບົນພື້ນຖານຄວາມເຫັນດີເປັນເອກະພາບຂອງທັງສອງຝ່າຍ ເປັນຕົ້ນ ແກ້ໄຂດ້ວຍຄູ່ສັນຍາສອງຝ່າຍ, ແກ້ໄຂຂໍ້ຂັດແຍ່ງດ້ວຍບຸກຄົນທີສາມ, ແກ້ໄຂໂດຍກົນໄກການຮ້ອງທຸກຂອງ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ.

ຄູ່ສັນຍາ ເຫັນດີກຳນົດເອົາ ວິທີການແກ້ໄຂຂໍ້ຂັດແຍ່ງ ແຕ່ລຸ່ມຂຶ້ນເທິງ ເຊັ່ນ ບ້ານ, ຄະນະກຳມະການປົກຄອງຕາແສງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຂັ້ນເມືອງ, ຫ້ອງການຍຸຕິທຳຂັ້ນເມືອງ, ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ສານປະຊາຊົນ.

**ມາດຕາ 12 ການປ່ຽນແປງສັນຍາ**

ສັນຍາສະບັບນີ້ ອາດມີການປ່ຽນແປງ ຫຼື ດັດແກ້ເນື້ອໃນ ຊຶ່ງຖືເປັນສ່ວນໜຶ່ງຂອງສັນຍາສະບັບນີ້ ບົນພື້ນຖານຄວາມເຫັນດີເປັນເອກະພາບຂອງທັງສອງຝ່າຍ ແລະ ເງື່ອນໄຂຂອງການປ່ຽນແປງສັນຍາ ດັ່ງນີ້:

1. ມີການປັບປຸງ ເງື່ອນໄຂດ້ານມາດຕະຖານການຜະລິດ, ມາດຕະຖານສິນຄ້າ ເພື່ອສະໜອງຄວາມຕ້ອງການຂອງຕະຫຼາດ;

2. ມາດຕະຖານສິນຄ້າ ແລະ ລາຄາສິນຄ້າ ມີການເພີ່ມຂຶ້ນ ຫຼື ຫຼຸດລົງ ຫຼາຍ ອັນໄດ້ສ້າງຜົນກະທົບຮ້າຍແຮງຕໍ່ຄູ່ສັນຍາ;

3. ມີການເພີ່ມ ຫຼື ຫຼຸດກິດຈະກຳ, ອຸປະກອນ, ປັດໄຈການລົງທຶນ ທີ່ກຳນົດໃນສັນຍາ;
4. ..........................................................................................................................;
5. ......................................................................................................................

**ມາດຕາ 13 ການສິ້ນສຸດສັນຍາ**

ສັນຍາສະບັບນີ້ ອາດມີການສິ້ນສຸດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ສິ້ນສຸດກຳນົດເວລາ ໂດຍບໍ່ມີການຕໍ່ສັນຍາ;
2. ອົງການຄຸ້ມຄອງວຽກງານກະສິກຳແບບມີສັນຍາ ຫຼື ການຈັດຕັ້ງລັດ ມີແຈ້ງການ, ຂໍ້ຕົກລົງ ຫຼື ຄຳສັ່ງ ໃຫ້ຍົກເລີກການຈັດຕັ້ງປະຕິບັດກິດຈະກຳດັ່ງກ່າວ ອັນເນື່ອງມາຈາກການລະເມີດລະບຽບກົດໝາຍທີ່ກ່ຽວຂ້ອງຢ່າງຮ້າຍແຮງ;
3. ..........................................................................................................................;
4. .................................................................................................................

**ມາດຕາ 14 ໄລຍະເວລາຂອງສັນຍາ**

ສັນຍາສະບັບນີ້ ມີກຳນົດເວລານຳໃຊ້ ແຕ່ວັນທີ....... ເດືອນ................ ປີ................ ຫາ ວັນທີ....... ເດືອນ................ ປີ................, ພາຍຫຼັງສິ້ນສຸດສັນຍາໃນທ້າຍລະດູການຜະລິດ ຄູ່ສັນຍາທັງສອງຝ່າຍ ຈະໄດ້ມີການທົບທວນເງື່ອນໄຂຂອງສັນຍາຄືນໃໝ່.

**ມາດຕາ 15 ການຮັກສາຄວາມລັບ**

ຄູ່ສັນຍາ ຕ້ອງຮັກສາຂໍ້ມູນທັງໝົດ ທີ່ໄດ້ຮັບຈາກອີກຝ່າຍໜຶ່ງ ເປັນຄວາມລັບ ຢ່າງເຂັ້ມງວດ ແລະ ຈະຕ້ອງບໍ່ເປີດເຜີຍ, ຍົກເວັ້ນແຕ່ມີຄວາມຈຳເປັນທີ່ຈະຕ້ອງໄດ້ປະຕິບັດຕາມພັນທະຂອງຕົນ ພາຍໃຕ້ກົດໝາຍ ແລະ ສັນຍາສະບັບນີ້.

**ມາດຕາ 16 ຜົນສັກສິດ**

ສັນຍາສະບັບນີ້ ມີຜົນສັກສິດທາງດ້ານກົດໝາຍ ແລະ ນຳໃຊ້ໄດ້ ນັບແຕ່ວັນທີ່ຄູ່ສັນຍາ, ພະຍານ ພ້ອມກັນລົງລາຍເຊັນ ແລະ ໄດ້ຮັບການຢັ້ງຢືນຈາກ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ/ເມືອງ ..........................., ນະຄອນຫຼວງວຽງຈັນ/ແຂວງ.............................................

ສັນຍາສະບັບນີ້ ຂຽນເປັນພາສາລາວ ລວມມີ ຫ້າ ໜ້າ, ສິບຫົກ ມາດຕາ ແລະ ໄດ້ເຮັດເປັນ ຫ້າ ສະບັບ ແຕ່ລະສະບັບມີຄຸນຄ່າເທົ່າທຽມກັນ ໂດຍໃຫ້ຄູ່ສັນຍາແຕ່ລະຝ່າຍເກັບຮັກສາໄວ້ ຜູ້ລະ ໜຶ່ງຊຸດ, ອົງການທະບຽນສານ ໜຶ່ງຊຸດ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ/ເມືອງ............................. ໜຶ່ງຊຸດ ແລະ ການຈັດຕັ້ງບ້ານ ທີ່ເປັນສະຖານທີ່ປະຕິບັດສັນຍາ ໜຶ່ງຊຸດ.

ຄູ່ສັນຍາ ໄດ້ອ່ານ ແລະ ມີຄວາມເຫັນດີເປັນເອກະພາບຕໍ່ກັບທຸກເນື້ອໃນຂອງສັນຍາສະບັບນີ້ ຈຶ່ງໄດ້ພ້ອມກັນລົງລາຍເຊັນ ໂດຍມີການເຊັນພະຍານຢ່າງໜ້ອຍ ຝ່າຍລະ ສອງ ຄົນ ຊຶ່ງໄດ້ຮັບການເຫັນດີຈາກຄູ່ສັນຍາ ກ່ອນນຳສະເໜີ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ/ເມືອງ......................................... ພິຈາລະນາຢັ້ງຢືນ.

ທີ່ ນະຄອນ/ເມືອງ.........................., ວັນທີ...........................

| **ລາຍເຊັນ "ຝ່າຍ ກ"** | **ລາຍເຊັນ "ຝ່າຍ ຂ"** |
|---|---|
| ຊື່ແຈ້ງ:....................................... | ຊື່ແຈ້ງ:....................................... |
| **ພະຍານ:** | **ພະຍານ:** |
| 1. …...................................... | 1. …...................................... |
| 2. ......................................... | 2. ......................................... |

**ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ/ເມືອງ............**